วาละสาน

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 03 ຫາ 07 ກຸມພາ 2025



ພະນັກງານບຳນານສ້າງລາຍໄດ້ ຈາກອາຊີບກະສິກຳດ້ວຍການລ້ຽງໄກ່ພັນໄຂ່ ແລະ ລ້ຽງປາ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ລຸງບຸນອ່ອນ ມີກຳໄລ 9 ແສນກີບຕໍ່ວັນ ຈາກການລ້ຽງໄກ່ພັນໄຂ່

ພາບ-ຂ່າວໂດຍ: ໜັງສືພິມເສດຖະກິດສັງຄົມ

ການສ້າງລາຍຮັບເຂົ້າສູ່ຄອບຄົວກໍຄືການພັດທະນາເສດຖະກິດໃຫ້ຄອບຄົວຫຼຸດພົ້ນອອກຈາກຄວາມທຸກຍາກທີ່ບໍ່ຂັດຕໍ່ລະບຽບກົດໝາຍຂອງບ້ານເມືອງເຊິ່ງເປັນໜຶ່ງໃນວຽກງານທີ່ລັດຖະບານໄດ້ສຸມໃສ່ປຸກລະດົມ ພໍ່ແມ່ປະຊາຊົນ, ກໍຄືພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ອົງການປົກຄອງແຕ່ລະຂັ້ນ ເປັນເຈົ້າການຈັດຕັ້ງປະຕິບັດຢ່າງເປັນລະບົບຕໍ່ເນື່ອງແລະ ເປັນຮູບປະທຳຫຼາຍຂຶ້ນຄືກັບ ຄອບຄົວຂອງລຸງບຸນອ່ອນ ສໍ ເມືອງຊາ ອາຍຸ 72 ປີພະນັກງານບຳນານຢູ່ບ້ານນາຊີງ ເມືອງພຽງ ແຂວງໄຊຍະບູລີ ແມ່ນໜຶ່ງໃນຄອບຄົວຕົວແບບໃນການສ້າງເສດຖະກິດເຊິ່ງລຸງໄດ້ເລົ່າສູ່ຟັງວ່າ: ພາຍໃນຄອບຄົວມີທັງໝົດ 11 ຄົນ, ມີແຮງງານຕົ້ນຕໍ 5 ຄົນ,

ເມື່ອກ່ອນລຸງເປັນພະນັກງານລັດພາຍຫຼັງຮອດອາຍຸກະສຽນພັກການອອກຮັບອຸດໜູນບຳນານແລ້ວໄດ້ມາຢູ່ນຳຄອບຄົວເຫັນວ່າການດຳລົງຊີວິດ, ການເປັນຢູ່ຂອງຄອບຄົວມີຄວາມຫຍຸ້ງຍາກຂາດເຂີນບໍ່ກຸ້ມກິນ ຈຶ່ງໄດ້ປຶກສານຳຄອບຄົວ(ເມຍ) ຊອກທາງອອກເມື່ອຄອບຄົວ ຕົກລົງເຫັນດີແລ້ວຈຶ່ງໄດ້ລົງມືບຸກເບີກຈົກໜອງປາ 3 ໜອງເພື່ອລ້ຽງປາ ແລະ ໄດ້ເຫັນວ່າຄອບຄົວຍັງບໍ່ທັນກຸ້ມກິນຍັງຂາດໆເຂີນໆ ແລະ ກໍໄດ້ເຫັນບ້ານອື່ນເມືອງເຂົາເຮັດຟາມລ້ຽງໄກ່ພັນໄຂ່ຕົນເອງຈຶ່ງໄດ້ປຶກສານຳຄອບຄົວ ແລະ ໄດ້ຕັດສິນໃຈລົງທຶນເຮັດຟາມໄກ່ 1 ຫຼັງ, ເບື້ອງຕົ້ນໄດ້ຊື້ໄກ່ພັນໄຂ່ ຈຳນວນ 2,000 ໂຕ ມູນຄ່າ 120 ລ້ານກີບຈາກນັ້ນເຫັນວ່າການລ້ຽງໄກ່ພັນ ໄຂ່ມີຜົນໄດ້ຮັບດີຂຶ້ນໄດ້ຂະຫຍາຍຟາມໄກ່ໄຂ່ອີກ 1 ຟາມ ລວມເປັນ 2 ຟາມລົງທຶນເຮັດຟາມໄກ່ແລະຊື້ໄກ່ພັນໄຂ່ມາ ເພິ່ນໄດ້ລົງທຶນເປັນຈຳນວນເງິນ 350 ລ້ານກີບ ມີແມ່ພັນໄກ່ໄຂ່ທັງໝົດ 4,000 ໂຕ ໂດຍສາມາດເກັບໄຂ່ໄດ້ 100 ແຕະຕໍ່ມື້, ການໃຫ້ອາຫານໄກ່ໃນມື້ໜຶ່ງແມ່ນໝົດ ທົວອາຫານ 16 ເປົາ, ເປົາໜຶ່ງລາຄາ 300,000 ກີບ ຂາຍໄຂ່ມື້ໜຶ່ງໄດ້ເງິນປະມານ 6 ລ້ານກີບ ລົບຄາທົວ ອາຫານຄາສິ້ນເປືອງອື່ນໆ ມີກຳໄລ 1,200,000 ລ້ານກີບຕໍ່ມື້.

ມາຮອດປະຈຸບັນນີ້ ລຸງໄດ້ຂາຍແມ່ໄກ່ທີ່ໝົດອາຍຸການໃຫ້ໄຂ່ ອອກຍັງເຫຼືອໄກ່ພັນໄຂ່ປະມານ 2,000 ໂຕ ເກືອທົວອາຫານມື້ໜຶ່ງໝົດ 10 ເປົາ, ເກັບໄຂ່ໄດ້ 60-70 ແຕະຕໍ່ ມື້, ມີສ່ວນເຫຼືອຫຼືກຳໄລ 800,000-900,000 ກີບຕໍ່ມື້ ພ້ອມດຽວການນີ້ລຸງຍັງ



ໄດ້ໃຫ້ຮູ້ວ່ານອກຈາກການລ້ຽງ ໄກ່ພັນໄຂ່ແລ້ວລຸງຍັງໄດ້ລ້ຽງປາ ໃນປີໜຶ່ງສາມາດລ້ຽງ ໄດ້ 2 ຊຸດ, ຊຸດລະ 35,000 ໂຕຕໍ່ປີ. ການໃຫ້ອາຫານປາ ແມ່ນ 1 ໂຕນຕໍ່ເດືອນລ້ຽງປະມານ 4 ເດືອນໄດ້ຂາຍອອກ, ການຂາຍແມ່ນຂາຍພາຍໃນເມືອງໃນລາຄາສົ່ງ ກິໂລ 45,000 ກີບ ຫາ 50,000 ກີບ ໂດຍອີງລາຄາທ້ອງຕະຫຼາດ ສະເລ່ຍປີໜຶ່ງຂາຍປາປະມານ 4 ໂຕນ, ໂຕນລະ 50 ລ້ານ ກີບ, ລວມເປັນເງິນ 200 ລ້ານກີບ, ເມື່ອຫັກຕົ້ນທຶນອອກ ຈະເຫຼືອ 100 ລ້ານກ່ວາກີບ ຈາກການລ້ຽງໄກ່ພັນໄຂ່ ແລະ ລ້ຽງປາມາຮອດປະຈຸບັນນີ້ຄອບຄົວຂອງລຸງໄດ້ມີລົດ ໃຫຍ່ 1 ຄັນ, ມີເຮືອນຢູ່ຖາວອນ, ມີເງິນສົ່ງລູກຫຼານໄປຮ່ຳຮຽນ ແລະ ມີເງິນແຮ່ໄວ້ໃຊ້ຈ່າຍໃນຄອບຄົວ, ການເປັນຢູ່ຂອງຄອບຄົວແມ່ນດີຂຶ້ນກ່ວາເກົ່າຫຼາຍ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄານ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;